ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 2063-ຫກ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2026

## ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

1. ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ໂຄງການໂຄງການລ້ອມແປງປະຕູຮົ້ວ ແລະ ກຳແພງ ທີ່ເປ່ເພ ຂອງສະຖາບັນກິລາ-ກາຍຍະກຳ (ສີເກີດ);
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສປຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທີ່ເໝາະສົມ ເພື່ອເຂົ້າຮ່ວມ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຈັດຕັ້ງ, ສະຖາບັນກິລາ-ກາຍຍະກຳ (ສີເກີດ) ຕາມວັນເວລາລັດຖະການ;
5. ສຳລັບເອກະສານປະມູນຄົບຊຸດ ບໍລິສັດທີ່ສົນໃຈເຂົ້າຮ່ວມປະມູນ ສາມາດຊື້ໄດ້ ໂດຍການຍື່ນໜັງສືສະເໜີຫາພະແນກບໍລິຫານ ແລະ ຈັດຕັ້ງ, ສະຖາບັນກິລາ-ກາຍຍະກຳ (ສີເກີດ) ຕາມວັນເວລາລັດຖະການ; ເລີ່ມແຕ່ວັນທີ 11 ພຶດສະພາ ຫາ ວັນທີ 17 ມິຖຸນາ 2026, ໃນລາຄາຊຸດລະ 1,000,000 ກີບ (ໜຶ່ງລ້ານກີບ) ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ສະຖານທີ່ສົ່ງຊອງປະມູນ ສົ່ງທີ່ ພະແນກບໍລິຫານ ແລະ ຈັດຕັ້ງ, ສະຖາບັນກິລາ-ກາຍຍະກຳ (ສີເກີດ) ຕາມວັນເວລາລັດຖະການ; ສຳລັບວັນ ແລະ ເວລາເປີດຊອງປະມູນ ແມ່ນກຳນົດເອົາວັນທີ 17 ມິຖຸນາ 2026, ສຳລັບການສົ່ງຊອງປະມູນຈະບໍ່ອະນຸຍາດໃຫ້ສົ່ງມາທາງເອເລັກໂຕຼນິກ ແລະ ຊອງປະມູນໃດທີ່ສົ່ງຊ້າ ບໍ່ທັນຕາມເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ພ້ອມທັງສົ່ງຄືນ ໂດຍບໍ່ມີການພິຈາລະນາໃນການເປີດຊ່ອງ; ຊອງປະມູນທຸກໆຊອງຈະໄດ້ເປີດ ໂດຍຊ້ອງໜ້າຄະນະກຳມະການ ການປະມູນ ແລະ ຕາງໜ້າບໍລິສັດທີ່ເຂົ້າຮ່ວມປະມູນ;
7. ທຸກຊອງປະມູນຕ້ອງໄດ້ປະກອບມີການຄ້ຳປະກັນການປະມູນເປັນແຊັກເງິນສົດຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນທີ່ສະເໜີມາ.
8. ສະຖານທີ່ພົວພັນແມ່ນ: ພະແນກບໍລິຫານ ແລະ ຈັດຕັ້ງ, ສະຖາບັນກິລາ-ກາຍຍະກຳ (ສີເກີດ) ຕັ້ງຢູ່ບ້ານສີເກີດ, ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ຕາມວັນເວລາລັດຖະການ; ໂທລະສັບ 021 633102 ຫຼື 020 98885885.

ຫົວໜ້າຫ້ອງການ

ຮສ. ປອ. ທຳວັນ ວົງຄຳຊາຍ

สแกนด้วย CamScanner